ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 4231/ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ 28 AUG 2026

ໜັງສືແຈ້ງເຊີນປະມູນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (ຜ-ຟຟລ), ຂໍເຊີນບັນດາບໍລິສັດ ທີ່ສົນໃຈ ແລະ ມີເງື່ອນໄຂ ເໝາະສົມ ເຂົ້າຮ່ວມປະມູນເປີດກວ້າງພາຍໃນ ສຳລັບວຽກຈັດຊື້ CPU Module ຂອງລະບົບ Frie Alarm controller ສຳລັບ ໂຮງຈັກ 1 ເຂື່ອນໄຟຟ້າເຊເສັດ 1-2 ແລະ ຈັດຊື້ ອຸປະກອນຮັບໃຊ້ ແລະ ປ່ຽນຖ່າຍພາກໄຟຟ້າ ປີ 2026 ຂອງ ເຂື່ອນໄຟຟ້າຫ້ວຍລຳພັນໃຫຍ່.

ການປະມູນ ຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງຂອງ ຜ-ຟຟລ ພາຍໃຕ້ລະບຽບຈັດຊື້-ຈັດຈ້າງ ຜ-ຟຟລ, ສະບັບປັບປຸງ ປີ 2024 ລົງວັນທີ 12/04/2024.

ບໍລິສັດທີ່ມີເງື່ອນໄຂເໝາະສົມ ສົນໃຈ ສາມາດຕິດຕໍ່ພົວພັນ ແລະ ກວດກາເບິ່ງເອກະສານປະມູນໄດ້ທີ່ ສຳນັກງານໃຫຍ່ ຜ-ຟຟລ, ຝ່າຍກົດໝາຍ-ສັນຍາ, ພະແນກຈັດຊື້, ໃນວັນລັດຖະການ, ນັບຈາກວັນທີ: 01/09/2026 ເຖິງ ວັນທີ: 21/09/2026 , ຕອນເຊົ້າເວລາ 08:30 – 12:00 ໂມງ ແລະ ຕອນບ່າຍ 13:00 – 17:00 ໂມງ. ສຳນັກງານ ຕັ້ງຢູ່ ຖະໜົນມິດຕະພາບລາວ - ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປລາວ ຕູ້ ປ.ນ 2392, ໂທລະສັບ: (856-21) 316 142, ໂທລະສານ: (856-21) 316 141, 316 834.

ບໍລິສັດ ທີ່ສົນໃຈ ແລະ ຕ້ອງການຊື້ເອກະສານປະມູນ, ຕ້ອງຍື່ນໜັງສືສະເໜີຊື້ຊອງປະມູນ ເຖິງ ຜ-ຟຟລ, ເລີ່ມແຕ່ວັນທີ 01/09/2026 ເຖິງວັນທີ: 21/09/2026 , ໃນລາຄາ 1,000,000 (ໜຶ່ງລ້ານກີບ) ກີບ/ຊຸດ, ວິທີ ການຊຳລະຕ້ອງເປັນເງິນສົດ, ໂດຍຈຳນວນເງິນດັ່ງກ່າວ ຜ-ຟຟລ ຈະບໍ່ມີການສົ່ງຄືນ.

ການລົງສຳຫຼວດ ແລະ ເກັບກຳຂໍ້ມູນ ຈະໄດ້ຈັດຂຶ້ນໃນວັນທີ: 24/09/2026 ເວລາ 10 : 30 ໂມງ, ທີ່ ບ້ານສະທົ່ວໃຕ້, ເມືອງທ່າແຕງ, ແຂວງເຊກອງ ແລະ ເວລາ 15 : 00 ໂມງ, ທີ່ບ້ານແສນວັງ, ເມືອງສາລະວັນ, ແຂວງສາລະວັນ.

ສຳລັບການເດີນທາງ ແລະ ຄ່າໃຊ້ຈ່າຍທີ່ເກີດຂຶ້ນ ເປັນຄວາມຮັບຜິດຊອບຂອງຜູ້ເຂົ້າຮ່ວມການສຳຫຼວດ.

ຊອງປະມູນຕ້ອງສົ່ງໃຫ້ ຜ-ຟຟລ ຕາມທີ່ຢູ່ຂ້າງເທິງ, ກ່ອນເວລາ 14 : 00 ໂມງ, ວັນທີ 14/10/2026 . ຊອງປະມູນໃດທີ່ສົ່ງຊ້າກວ່າເວລາກຳນົດໄວ້, ຜ-ຟຟລ ຈະບໍ່ຮັບເອົາ ແລະ ຈະສົ່ງຄືນ ໂດຍບໍ່ມີການເປີດຊອງ, ຊອງ ປະມູນຈະເລີ່ມເປີດໃນເວລາ 14 : 00 ໂມງ, ວັນທີ 14/10/2026 . ໂດຍຊ້ອງໜ້າຄະນະກຳມະການຈັດຊື້ ຜ-ຟຟລ ແລະ ຕົວແທນຂອງຜູ້ເຂົ້າແຂ່ງຂັນປະມູນທີ່ສົນໃຈເຂົ້າຮ່ວມນຳ.

ດ້ວຍຄວາມນັບຖື,

ຜູ້ອຳນວຍການໃຫຍ່

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ດາວວຽງ ສຸບັນທະລາດ

ຮັກສາການ ຜູ້ອຳນວຍການໃຫຍ່